ASTRA

Newsletter



ປົດຂ່າວ, ສະບັບທີ 4 | ເມສາ 2023

# ASTRA ສືບຕໍ່ກ້າວໄປຂ້າງໜ້າ!

## ASTRA ສ້າງຂີດຄວາມສາມາດຂ້າມຊາດ

ໃນເດືອນ ພະຈິກ 2022, ໄດ້ມີການຈັດຕັ້ງ**ໂຄງການເສີມສ້າງຂີດຄວາມສາມາດຂ້າມຊາດ**ສໍາລັບບັນດາຜູ້ບໍລິຫານຂອງ ASTRA R&D Hubs ຂຶ້ນ. ໂດຍມີ **13 ຕົວແທນ** ຈາກສີ່ມະຫາວິທະຍາໄລທີ່ເຂົ້າຮ່ວມ ຈາກປະເທດລາວ (ມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລສະຫວັນນະເຂດ) ແລະ ປະເທດໄທ (ມະຫາວິທະຍາໄລສົງຂາ, ມະຫາວິທະຍາໄລຊຽງໃໝ່) ໄດ້ເດີນທາງໄປທີ່ເອີຣົບ ເພື່ອເຂົ້າຮ່ວມ **ການຝຶກອົບຮົມຢ່າງລົງເລິກເປັນເວລາ 3 ອາທິດ** ເຊິ່ງຈັດຂຶ້ນໂດຍຄູ່ຮ່ວມມືທີ່ເປັນຜູ້ຊ່ຽວຊານໃນເອີຣົບ (ມະຫາວິທະຍາໄລ ຟລໍເຣັນ, ຊິມເພລັກຊິສ໌ ແລະ ມະຫາວິທະຍາໄລເສດຖະສາດ ແລະ ບໍລິຫານທຸລະກິດ ເອເທັນຊ໌).

### 7-11 ພະຈິກ 2022, ຟລໍເຣັນ, ປະເທດອີຕາລີ

ອາທິດທໍາອິດຂອງການຝຶກອົບຮົມຈັດຂຶ້ນທີ່ **ຟລໍເຣັນ, ປະເທດອີຕາລີ ໃນວັນທີ 7-11 ພະຈິກ 2022** ເຊິ່ງມະຫາວິທະຍາໄລ ຟລໍເຣັນເປັນເຈົ້າພາບ. ໂດຍມຸ່ງເນັ້ນການຖ່າຍທອດຄວາມຮູ້ ແລະ ຄວາມຊ່ຽວຊານກ່ຽວກັບການດໍາເນີນວຽກງານການຄົ້ນຄວ້າ ແລະ ພັດທະນາໃນຂະແໜງວິທະຍາສາດສັງຄົມສໍາລັບຜູ້ທີ່ຈະເປັນຜູ້ບໍລິຫານ R&D.

ການນໍາສະເໜີແນວທາງຍຸດທະສາດ ແລະ ການບໍລິຫານສະຖາບັນ, ຄວບຄູ່ໄປກັບວິທີການສະເພາະເຈາະຈົງໃນການພັດທະນາຂໍ້ສະເໜີເພື່ອສະແຫວງຫາໂອກາດໃນການລະດົມທຶນຂອງສະຖາບັນ.

ຫຼັກສູດອອນໄລທີ່ພັດທະນາໂດຍມະຫາວິທະຍາໄລເສດຖະສາດ ແລະ ບໍລິຫານທຸລະກິດ ເອເທັນຊ໌ ແລະ ມີເປົ້າໝາຍແມ່ນພະນັກງານທີ່ຈະຖືກລວມເຂົ້າຢູ່ໃນການດໍາເນີນງານຂອງ ASTRA R&D Hubs.

ຜູ້ເຂົ້າຮ່ວມທຸກຄົນໄດ້ຊົມເຊີຍຂະບວນການຮຽນຮູ້ຢ່າງຍິ່ງຕາມຜົນການປະເມີນ.

### 14-25 ພະຈິກ 2022, ເອເທັນຊ໌, ປະເທດເກຣັກ

ໃນໄລຍະທີສອງຂອງການຝຶກອົບຮົມແມ່ນຈັດຂຶ້ນທີ່ປະເທດເກຣັກ, ໂດຍຊິມເພລັກຊິສ໌ ແລະ ມະຫາວິທະຍາໄລເສດຖະສາດ ແລະ ບໍລິຫານທຸລະກິດ ເອເທັນຊ໌ເປັນເຈົ້າພາບ. **ເຊິ່ງປະກອບດ້ວຍການນໍາເໜີຜົນງານ**




astra-project.eu

info@symplexis.eu
symplexis.eu

Co-funded by the Erasmus+ Programme of the European Union

This project has been funded with support from the European Commission. The European Commission's support for the production of this document does not constitute an endorsement of the contents, which reflect the views only of the authors, and the Commission cannot be held responsible for any use which may be made of the information contained therein. Agreement number: 618963-EPP-I-2020-1-LA-EPPKA2-CBHE-JP

symplexis

**2 ອາທິດເຕັມ, ກອງປະຊຸມໂຕ້ຕອບ ແລະ ບົດເຝິກຫັດ** ຕະຫຼອດຮອດ **ການຢ້ຽມຊົມ**ສູນ R&D ຂອງມະຫາວິທະຍາໄລທີ່ມີຊື່ສຽງ.

ສຸມໃສ່ການເສີມຂະຫຍາຍຄວາມຮູ້ ແລະ ທັກສະຂອງຜູ້ບໍລິຫານ ASTRA R&D Hubs ໃນດ້ານການເປັນຜູ້ນໍາ, ການບໍລິຫານຈັດການ ແລະ ການສະແຫວງຫາໂອກາດໃນການລະດົມທຶນຂອງພາກລັດ ແລະ ເອກະຊົນ. ໂຄງການ ແລະ ຫຼັກສູດໂດຍລວມແມ່ນຖືກອອກແບບ ແລະ ຈັດຕັ້ງໂດຍຊິມເພລັກຊິສ໌ (Symplexis).

ຜູ້ເຂົ້າຮ່ວມມີສ່ວນຮ່ວມໃນບົດຝຶກຫັດໂຕ້ຕອບອີງຕາມສະຖານະການໃຊ້ຊີວິດຕົວຈິງກ່ຽວກັບ i ) ວິທີການເປັນຜູ້ນໍາທີ່ມີປະສິດທິພາບ, ii) ການກະກຽມໃບສະໝັກສໍາລັບການຂໍໂອກາດລະດົມທຶນຈາກສະຫະພາບເອີຣົບ, ແລະ iii) ຂະບວນການບໍລິຫານ ແລະ ການເງິນ.

ນອກຈາກນີ້, ຍັງມີການຈັດກິດຈະກໍາທາງວັດທະນະທໍາ ແລະ ທັດສະນະສຶກສາຢ້ຽມຊົມສະຖານທີ່ໜ້າສົນໃຈໃນເອເທັນຊ໌, ເຊິ່ງໃນລະຫວ່າງນີ້ຜູ້ເຂົ້າຮ່ວມໄດ້ມີໂອກາດໃນການພັດທະນາທັກສະດ້ານການແລກປ່ຽນວັດທະນະທໍາເຊິ່ງກັນ ແລະ ກັນ ພ້ອມທັງພົບປະຜູ້ຊ່ຽວຊານຈາກມະຫາວິທະຍາໄລເກຣັກ ທີ່ປະສົບຜົນສໍາເລັດໃນການດໍາເນີນງານສູນຄົ້ນຄວ້າ ແລະ ພັດທະນາ.



ເຊັ່ນດຽວກັບອາທິດທໍາອິດ, ຜູ້ເຂົ້າຮ່ວມທຸກຄົນຊົມເຊີຍໂຄງການເສີມສ້າງຂີດຄວາມສາມາດ ແລະ ພົບວ່າມີປະໂຫຍດຢ່າງຍິ່ງສໍາລັບວຽກງານທີ່ກໍາລັງຈະມາເກີດຂຶ້ນໃນຖານະເປັນຜູ້ຈັດການ ແລະ ຜູ້ນໍາຂອງ R&D Hubs ທີ່ກໍາລັງຈະກໍ່ຕັ້ງຂຶ້ນໃນແຕ່ລະມະຫາວິທະຍາໄລ.

# ASTRA ການຝຶກອົບຮົມແຫ່ງຊາດ

ພາຍຫຼັງການເຂົ້າຮ່ວມຫຼັກສູດການເສີມສ້າງຄວາມສາມາດຂ້າມຊາດ ວ່າດ້ວຍການເປັນຜູ້ນໍາ, ຜູ້ບໍລິຫານ ASTRA R&D Hubs **ໄດ້ຈັດການຝຶກອົບຮົມແນໃສ່ພະນັກງານຂອງມະຫາວິທະຍາໄລໃນປະເທດທີ່ກ່ຽວຂ້ອງ.**

**ການຝຶກອົບຮົມແຫ່ງຊາດ 4 ຄັ້ງ** ໄດ້ຖືກສົ່ງມອບໃນຕົ້ນປີ 2023 ໃນແຕ່ລະມະຫາວິທະຍາໄລທີ່ເຂົ້າຮ່ວມຈາກປະເທດ ລາວ ແລະ ປະເທດໄທ, ອີງໃສ່ເນື້ອໃນຂອງຫຼັກສູດອອນລາຍທີ່ພັດທະນາຂຶ້ນເປັນສື່ຫຼັກໃນການຝຶກອົບຮົມ. ເນື້ອໃນຂອງຫຼັກສູດໄດ້ຖືກເສີມດ້ວຍແບບທົດສອບເພີ່ມເຕີມ, ການນໍາສະເໜີ, ຕົວຢ່າງ ແລະ ການເຮັດບົດເຝິກຫັດແບບໂຕ້ຕອບທີ່ຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ຮັບການແນະນໍາເຂົ້າໃຫ້ຮູ້ຈັກຂະບວນການລະດົມທຶນ ແລະ ການຄຸ້ມຄອງການປະມູນທີ່ແຕກຕ່າງກັນ. ໃຫ້ຄໍາແນະນໍາເທື່ອລະຂັ້ນຕອນກ່ຽວກັບວິທີການກໍານົດ ແລະ ທີ່ສໍາຄັນທີ່ສຸດແມ່ນການຕິດຕາມກອງທຶນຂອງສະຖາບັນ / ຜູ້ໃຫ້ທຶນ ທີ່ມີປະສິດທິຜົນໄດ້ຖືກນໍາສະເໜີໃຫ້ພະນັກງານທີ່ຈະມີສ່ວນຮ່ວມໃນການດໍາເນີນງານຂອງ R&D Hub.

ໃນນັ້ນ, ພະນັກງານຂອງມະຫາວິທະຍາໄລທັງໝົດ 72 ຄົນໄດ້ເຂົ້າຮ່ວມການຝຶກອົບຮົມ, ເຊິ່ງເກີນເປົ້າໝາຍທີ່ໄດ້ວາງໄວ້ໃນເບື້ອງຕົ້ນ. ຈາກການປະເມີນຜົນຢ່າງລະອຽດໄດ້ສະແດງໃຫ້ເຫັນວ່າຜູ້ເຂົ້າຮ່ວມສ່ວນໃຫຍ່ໄດ້ຍົກຍ້ອງການຝຶກອົບຮົມ ແລະ ເຫັນວ່າມີຄຸນຄ່າສໍາລັບການພັດທະນາດ້ານວິຊາຊີບຂອງພວກເຂົາ ແລະ ເປັນປະໂຫຍດຕໍ່ການດໍາເນີນງານຂອງ R&D Hub.

## ມະຫາວິທະຍາໄລແຫ່ງຊາດລາວ

ການຝຶກອົບຮົມແຫ່ງຊາດ ASTRA ທີ່ມະຫາວິທະຍາໄລແຫ່ງຊາດລາວ (ມຊ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ **23-25 ມັງກອນ 2023**. ຊຸດຝຶກອົບຮົມ ແລະ ກອງປະຊຸມກ່ຽວກັບເຕັກນິກການລະດົມທຶນ R&D ແລະ ຊັບພະຍາກອນໃນຂະແໜງ ICT ແລະ ວິທະຍາສາດສັງຄົມ ໄດ້ຖືກມອບໃຫ້ 15 ຄະນະວິຊາ ແລະ ພະນັກງານບໍລິຫານຂອງຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ວິສະວະກໍາສາດ ແລະ ວິທະຍາສາດທໍາມະຊາດ. ພາຍຫຼັງການຝຶກອົບຮົມ, ໝາກຜົນສໍາຄັນຂອງການຝຶກອົບຮົມປະກອບດ້ວຍ 2 ແນວຄວາມຄິດທີ່ໄດ້ປຶກສາຫາລື

This project has been funded with support from the European Commission. The European Commission's support for the production of this document does not constitute an endorsement of the contents, which reflect the views only of the authors, and the Commission cannot be held responsible for any use which may be made of the information contained therein. Agreement number: 618963-EPP-I-2020-1-LA-EPPKA2-CBHE-JP

ແລະ ສະເໜີໃນກອງປະຊຸມ ແລະ ເພີ່ມທະວີຄວາມຮັບຮູ້ຂອງຜູ້ເຂົ້າຮ່ວມກ່ຽວກັບໂອກາດໃນການລະດົມທຶນໃນລະດັບຊາດ ແລະ ພາກພື້ນ. ນອກຈາກນີ້, ຜູ້ເຂົ້າຮ່ວມຍັງຍິນດີທີ່ຈະກະກຽມໃບສະໝັກການຂໍທຶນຕົວຈິງໂດຍການຊ່ວຍເຫຼືອຂອງຜູ້ຊ່ຽວຊານຈາກ ASTRA ແລະ ບັນດາສະມາຊິກອາຈານຜູ້ອາວຸໂສ.



## ມະຫາວິທະຍາໄລຊຽງໃໝ່, ປະເທດໄທ

ຫ້ອງການບໍລິຫານຄຸ້ມຄອງການຄົ້ນຄວ້າ, ມະຫາວິທະຍາໄລຊຽງໃໝ່ ໄດ້ຈັດຝຶກອົບຮົມພາຍໃຕ້ຫົວຂໍ້ "ເຕັກນິກການລະດົມທຶນ R&D ແລະ ຊັບພະຍາກອນໃນຂະແໜງ ICT ແລະ ວິທະຍາສາດສັງຄົມ" ໃນລະຫວ່າງວັນທີ **11-13 ມັງກອນ 2023** ທີ່ສູນການຮຽນຮູ້ນະວັດຕະກໍາ CMU. ໂຄງການຝຶກອົບຮົມໄດ້ສຸມໃສ່ການກະກຽມການສະເຫນີສໍາລັບການຮ້ອງຂໍເງິນທຶນຕັ້ງແຕ່ເລີ່ມຕົ້ນຈົນເຖິງການຍື່ນສະເຫນີ.




ການເຂົ້າຮ່ວມຝຶກອົບຮົມຄັ້ງນີ້ ມີນັກວິຊາການ ແລະ ພະນັກງານບໍລິຫານທັງໝົດ 22 ທ່ານ ຈາກ 8 ຄະນະວິຊາ ແລະ 6 ພະແນກການເຂົ້າຮ່ວມ. ມີການສົນທະນາກ່ຽວກັບທິດທາງການດໍາເນີນງານ, ພາລະບົດບາດ ແລະ ຫນ້າທີ່ຂອງສູນຄົ້ນຄວ້າ ແລະ ນະວັດຕະກໍາ CMU ASTRA ທີ່ຈະສ້າງຕັ້ງຂຶ້ນໃນທ້າຍເດືອນມີນາ 2023.

## ມະຫາວິທະຍາໄລສົງຂາ, ປະເທດໄທ

ການຝຶກອົບຮົມແຫ່ງຊາດ ASTRA ທີ່ມະຫາວິທະຍາໄລສົງຂາ (ວິທະຍາເຂດພູເກັດ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ **18-20 ມັງກອນ 2023**. ຊຸດຝຶກອົບຮົມ ແລະ ກອງປະຊຸມກ່ຽວກັບເຕັກນິກການລະດົມທຶນ R&D ແລະ ຊັບພະຍາກອນໃນຂະແໜງ ICT ແລະ ວິທະຍາສາດສັງຄົມ ໄດ້ມອບໃຫ້ຄະນະວິຊາ ແລະ ພະນັກງານບໍລິຫານຂອງຄະນະວິທະຍາສາດສັງຄົມ ແລະ ICT ຈໍານວນ 20 ທ່ານ. ຜົນໄດ້ຮັບທີ່ສໍາຄັນຂອງການຝຶກອົບຮົມປະກອບມີສາມແນວຄວາມຄິດທີ່ສະເໜີໃນກອງປະຊຸມ ແລະ ຄວາມຮັບຮູ້ຂອງຜູ້ເຂົ້າຮ່ວມເພີ່ມຂຶ້ນກ່ຽວກັບໂອກາດໃນການລະດົມທຶນ.




## ມະຫາວິທະຍາໄລສະຫວັນນະເຂດ, ປະເທດລາວ

ການຝຶກອົບຮົມແຫ່ງຊາດພາຍໃຕ້ໂຄງການ Erasmus+ ASTRA ໄດ້ຈັດຂຶ້ນເປັນເວລາ 3 ວັນ, ແຕ່ວັນທີ **1-3 ກຸມພາ 2023** ທີ່ຫໍສະໝຸດ SKU, ຫ້ອງ No. ADB, ມະຫາວິທະຍາໄລສະຫວັນນະເຂດ (ວິທະຍາເຂດນາເຊັງ). ຄະນະວິຊາ ແລະ ພະນັກງານບໍລິຫານຂອງຄະນະວິທະຍາສາດສັງຄົມ ແລະ ICT ຈໍານວນ 15 ທ່ານ.

This project has been funded with support from the European Commission. The European Commission's support for the production of this document does not constitute an endorsement of the contents, which reflect the views only of the authors, and the Commission cannot be held responsible for any use which may be made of the information contained therein. Agreement number: 618963-EPP-I-2020-1-LA-EPPKA2-CBHE-JP

ລວມທັງຄະນະສຶກສາສາດ, ຄະນະພາສາສາດ ແລະ ມະນຸດສາດ, ຄະນະບໍລິຫານທຸລະກິດ, ແລະ ຄະນະຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ ໄດ້ຮັບການຝຶກອົບຮົມກ່ຽວກັບເຕັກນິກການລະດົມທຶນ R&D ແລະຊັບພະຍາກອນໃນ ICT ແລະ ວິທະຍາສາດສັງຄົມ. ທັງໝົດ 8 ໂມດູນໄດ້ຖືກມອບໃຫ້ພະນັກງານ SKU ທັງໝົດ 15 ຄົນ ພ້ອມກັບລາຍລະອຽດທັງໝົດ.




## ກອງປະຊຸມພັນທະມິດຂອງໂຄງການ ASTRA ແບບເຊິ່ງໜ້າຄັ້ງທີສອງ ທີ່ຟລໍເຣັນ, ອີຕາລີ

**ກອງປະຊຸມພັນທະມິດຂອງໂຄງການ ASTRA ແບບເຊິ່ງໜ້າຄັ້ງທີສອງ** ຈັດຂຶ້ນໃນວັນທີ **08-10 ກຸມພາ 2023** ທີ່ຟລໍເຣັນ, ປະເທດອີຕາລີ. ເຊິ່ງ **ມະຫາວິທະຍາໄລຟລໍເຣັນ** ເປັນເຈົ້າພາບ.

ຕາງໜ້າຂອງພັນທະມິດທັງໝົດ ໄດ້ມີການສະຫຼຸບຜົນງານທີ່ຜ່ານມາ ແລະ ກຳນົດຄວາມຄືບໜ້າໃນຂັ້ນຕອນຕໍ່ໄປ ດ້ວຍການວາງແຜນມື້ກຳນົດ ແລະ ວິທີການເພື່ອບັນລຸໃນພາລະກິດຕໍ່ໄປ.



ການປະຊຸມຜູ້ບໍລິຫານໄດ້ສະແດງໃຫ້ເຫັນການລິເລີ່ມປະຕິບັດວຽກງານທ້າຍປີຂອງໂຄງການ. ບັນດາພັນທະມິດໄດ້ສົນທະນາກັນໃນການຈັດສັນປະຕິບັດ National Training ຕະຫຼອດຈົນຮອດການວາງແຜນການຈັດງານການເປີດໂຕ the ASTRA R&D Hubs ຂອງແຕ່ລະມະຫາວິທະຍາໄລທີ່ກ່ຽວຂ້ອງ.

ໃນປີ 2023, ຜູ້ບໍລິຫານຂອງໂຄງການ ASTRA ຈະວາງແຜນປະຕິບັດການດຳເນີນງານ the ASTRA Hubs ໂດຍການວາງຮູບແບບການໃຫ້ບໍລິການ.



ໃນຕອນທ້າຍປີ, the Hubs ຈະສະແດງໃຫ້ເຫັນເຖິງວຽກງານທີ່ປະຕິບັດແລ້ວຢ່າງເປັນທາງການຂອງທັງສີ່ມະຫາວິທະຍາໄລ.

This project has been funded with support from the European Commission. The European Commission's support for the production of this document does not constitute an endorsement of the contents, which reflect the views only of the authors, and the Commission cannot be held responsible for any use which may be made of the information contained therein. Agreement number: 618963-EPP-I-2020-1-LA-EPPKA2-CBHE-JP

## ກ້າວຕໍ່ໄປ

ກ້າວຕໍ່ໄປຂອງ ASTRA ປະກອບມີການຈັດຕັ້ງຂອງກິດຈະກຳການເປີດຕົວຢ່າງເປັນທາງການໃນສີ່ມະຫາວິທະຍາໄລທີ່ເຂົ້າຮ່ວມໃນປະເທດລາວ ແລະ ປະເທດໄທໃນລະຫວ່າງທີ່ຜູ້ຕາງໜ້າທາງດ້ານກົດໝາຍຈະລົງນາມໃນຄຳສັ່ງປະຕິບັດງານຂອງ Hubs. ດັ່ງນັ້ນຈຶ່ງກຳນົດຢູ່ໃນຜັງງານການບໍລິການຂອງມະຫາວິທະຍາໄລ.

ພາຍຫຼັງການຈັດງານ ASTRA Hub ຂອງແຕ່ລະທີມ, ພາຍໃຕ້ການຊີ້ນຳຂອງຜູ້ບໍລິຫານ ASTRA ທີ່ໄດ້ຮັບການຝຶກອົບຮົມ ແລະ ການສະໜັບສະໜູນຈາກຄູ່ຮ່ວມງານຜູ້ຊ່ຽວຊານຂອງເອີຣົບ, ຈະປະຕິບັດຕາມຍຸດທະສາດສ່ວນບຸກຄົນ ແລະ ຄຳແນະນຳການດຳເນີນງານໂດຍການສະໜອງການບໍລິການທີ່ຄາດໄວ້ທີ່ກ່ຽວຂ້ອງກັບ ICT ແລະ ວິທະຍາສາດສັງຄົມ ໃນໂອກາດການສະໜອງທຶນ.

ໃນຕອນທ້າຍຂອງປີ, ແຕ່ລະ Hub ຈະສະແດງໃຫ້ເຫັນເຖິງວຽກງານທີ່ປະຕິບັດແລ້ວຢ່າງເປັນທາງການ ແລະ ຈະດຳເນີນການຢ່າງໜ້ອຍໜຶ່ງໂອກາດໃນການສະໜອງທຶນສາກົນໃນສາຂາຂອງ ICT ແລະ ວິທະຍາສາດສັງຄົມ.

## ການປະຊຸມອອນໄລປະຈຳເດືອນຂອງໂຄງການ ASTRA

ສະມາຄົມຂອງ ASTRA ປະຊຸມທາງອອນໄລນ໌ເປັນປະຈຳໃນທຸກໆເດືອນເພື່ອຕິດຕາມ ແລະ ມາດຕະຖານຄວາມຄືບໜ້າຂອງໂຄງການ

**FOLLOW US!** astra-project.eu | astra.eu.project | @ASTRA_Project

## Partners

National University of Laos (Laos)

Savannakhet University (Laos)

Prince of Songkla University (Thailand)

Chiang Mai University (Thailand)

Universita Degli Studi Firenze (Italy)

Athens University of Economics and Business (Greece)

Symplexis (Greece)

BK Consult (Germany)

**astra-project.eu**

info@symplexis.eu
symplexis.eu

Co-funded by the Erasmus+ Programme of the European Union

This project has been funded with support from the European Commission. The European Commission's support for the production of this document does not constitute an endorsement of the contents, which reflect the views only of the authors, and the Commission cannot be held responsible for any use which may be made of the information contained therein. Agreement number: 618963-EPP-I-2020-1-LA-EPPKA2-CBHE-JP